ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ລາວ-ຫວຽດນາມ ສືບຕໍ່ຮັດແໜ້ນຮ່ວມມືດ້ານປະກັນໄພເງິນຝາກ



ກອງປະຊຸມພົບປະສອງຝ່າຍລະຫວ່າງ ສຳນັກງານປົກປ້ອງເງິນຝາກ (ສປງ) ແລະ ປະກັນໄພເງິນຝາກຫວຽດນາມ (DIV) ໄດ້ດຳເນີນໄປດ້ວຍບັນຍາກາດທີ່ດີ ແລະ ມີໝາກຜົນຕົວຈິງ ຊຶ່ງໄດ້ຈັດຂຶ້ນໃນວັນທີ 15 ກໍລະກົດ 2019 ທີ່ສຳນັກງານດັ່ງກ່າວ. ຝ່າຍລາວນຳໂດຍທ່ານນາງ ແສງດາວວີ ວົງຄຳຊາວ ຫົວໜ້າ ສປງ ແລະ ຝ່າຍຫວຽດນາມ ນຳໂດຍທ່ານ ວູ໋ ວັນ ລ໋ອງ ຮອງຜູ້ອຳນວຍການປະກັນໄພເງິນຝາກຫວຽດນາມ ແລະ ມີບັນດາພະນັກງານຂັ້ນສູງຂອງທັງ 2 ຝ່າຍເຂົ້າຮ່ວມ.

ການພົບປະໃນຄັ້ງນີ້ ຖືວ່າເປັນນິມິດໝາຍທີ່ດີ ທີ່ໄດ້ປ່ຽນສະຖານະພາບຈາກວິສາຫະກິດຂອງລັດ ເປັນສະຖາບັນການເງິນໜຶ່ງຂອງລັດພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ຕາມດຳລັດວ່າດ້ວຍການປົກປ້ອງເງິນຝາກ ແລະ ໄດ້ປ່ຽນຊື່ຈາກກອງທຶນປົກປ້ອງຜູ້ຝາກເງິນມາເປັນ ສປງ ແລະ ກໍ່ເປັນໄລຍະເວລາ 11 ປີ ທີ່ປະກັນໄພເງິນຝາກຂອງລາວ ແລະ ຫວຽດນາມໄດ້ມີການຮ່ວມມືສອງຝ່າຍ ແລະ ໄດ້ມີການແລກປ່ຽນບົດຮຽນ, ປະສົບການກ່ຽວກັບວຽກງານປົກປ້ອງເງິນຝາກ ໂດຍເລີ່ມຈາກໜັງສືແລກປ່ຽນການຮ່ວມມືສອງຝ່າຍໃນກາງປີ 2008 ແລະ ໃນເວລາຕໍ່ມາກໍ່ໄດ້ມີການເຊັນບົດບັນທຶກຄວາມເຂົ້າໃຈ (MOU) ໃນເດືອນເມສາ 2011 ແລະ ຮ່ວມກັນເຊັນ MOU ສະບັບປັບປຸງເນື້ອໃນເດືອນທັນວາ 2015 ຊຶ່ງການທົບທວນການຈັດຕັ້ງປະຕິບັດຕາມ MOU ໄດ້ປະຕິບັດທຸກໆປີ ໂດຍຜັດປ່ຽນກັນເປັນເຈົ້າພາບ.

ການປຶກສາຫາລືໃນຄັ້ງນີ້ ມີ 4 ບັນຫາຫຼັກ ຄື: ການຕີລາຄາຄືນຜົນສຳເລັດຂອງການຮ່ວມມືສອງຝ່າຍໃນໄລຍະ 1 ປີ ຜ່ານມາ; ແຜນການຮ່ວມມືລະຫວ່າງສອງອົງກອນໃນຕໍ່ໜ້າ; ການປັບປຸງເນື້ອໃນ MOU ລະຫວ່າງ ສປງ ແລະ ປະກັນໄພເງິນຝາກຫວຽດນາມ ແລະ ປຶກສາຫາລືກ່ຽວກັບປະສົບການຂອງ DIV ໃນການປະຕິບັດວຽກງານນຳກຸ່ມທະນາຄານໂລກ ແລະ ໝາກຜົນຂອງການຮ່ວມມືສອງຝ່າຍໃນ 1 ປີທີ່ຜ່ານມາຊຶ່ງ ສປງ ໄດ້ໄປຖອດຖອນບົດຮຽນໃນ 6 ຫົວຂໍ້ຄື: ການບໍລິຫານທຶນ, ວິທີການເກັບກຳຂໍ້ມູນເງິນຝາກ, ການບໍລິຫານຈັດການລະບົບຂໍ້ມູນຂ່າວສານ, ການບໍລິຫານຈັດການລະບົບເຄືອຂ່າຍພາຍໃນ, ການປະຕິບັດວຽກງານຕົວຈິງຂອງການບໍລິຫານຊັບພະຍາກອນມະນຸດ, ການປະຕິບັດວຽກງານຕົວຈິງຂອງພະແນກຫ້ອງການ DIV; ພ້ອມທັງມີການປະຊຸມພົບປະສອງຝ່າຍລະຫວ່າງ ສປງ ແລະ DIV ທີ່ຮ່າໂນຍ, ສສ. ຫວຽດນາມ.

ແຜນການຮ່ວມມືໃນປີ 2020; ສປງ ສະເໜີໃຫ້ສືບຕໍ່ແລກປ່ຽນບົດຮຽນກ່ຽວກັບວຽກງານປະກັນໄພເງິນຝາກກັບ DIV ເຊິ່ງຈະໄດ້ລົງເລິກຕໍ່ກັບການຕິດຕາມສະພາບຂອງທະນາຄານທຸລະກິດ ແລະ ບັນດາສາຂາຂອງທະນາຄານທຸລະກິດທີ່ມາສ້າງຕັ້ງຢູ່ ສປປ ລາວ ເພື່ອແລກປ່ຽນຂໍ້ມູນຂ່າວສານແລະສາມາດຕິດຕາມສະພາບຂອງບັນດາສະມາຊິກທີ່ຕິດພັນກັບຫຼັກການສຳຄັນຂອງລະບົບປະກັນໄພເງິນຝາກທີ່ມີປະສິດທິຜົນ (IADI Core Principles) ເຊັ່ນ: ບັນຫາຂ້າມແດນ (Cross Border Issues) ຊຶ່ງຫົວຂໍ້ລະອຽດທີ່ຈະແລກປ່ຽນກັນນັ້ນຈະປຶກສາຕື່ມອີກຕາມພາຍຫຼັງ.

ໃນໂອກາດດຽວກັນນີ້, ສປງ ແລະ DIV ກໍ່ໄດ້ຮ່ວມກັນຈັດສຳມະນາ ໂດຍມີຊ່ຽວຊານຈາກ DIV ພາຍໃຕ້ 2 ຫົວຂໍ້ໃນນີ້ມີ “ການບໍລິຫານຄັງປົກປ້ອງເງິນຝາກ ແລະ ການຈັດຕັ້ງປະຕິບັດວຽກງານການສ້າງຄວາມຮັບຮູ້ໃຫ້ແກ່ມວນຊົນ” ຊຶ່ງເປັນວຽກງານທີ່ສຳຄັນໃນໄລຍະທີ່ກຳລັງສຸມໃສ່ການຄົ້ນຄວ້າຂໍ້ຕົກລົງວ່າດ້ວຍຄັງຕ່າງໆຂອງ ສປງ. ນອກຈາກນີ້, ຍັງໄດ້ຄົ້ນຄວ້າຮ່າງແຜນຍຸດທະສາດກ່ຽວກັບການສ້າງຄວາມຮັບຮູ້ໃຫ້ແກ່ມວນຊົນ; ສະນັ້ນ, ເຫັນວ່າຍັງມີຫຼາຍດ້ານທີ່ຈະຕ້ອງໄດ້ລົງເລິກຕື່ມອີກ ໂດຍສະເພາະວິທີການບໍລິຫານຄັງເງິນປົກປ້ອງເງິນຝາກ ເພື່ອເຮັດໃຫ້ຄັງດັ່ງກ່າວມີການເຕີບໃຫຍ່ຂະຫຍາຍຕົວ ແລະ ສາມາດຮັບປະກັນໃນການຈ່າຍຄືນເງິນຝາກໃຫ້ແກ່ຜູ້ຝາກເງິນໃນກໍລະນີສະຖາບັນການເງິນໃດໜຶ່ງທີ່ເປັນສະມາຊິກຫາກລົ້ມລະລາຍ ແລະ ໃຫ້ສັງຄົມຮູ້ບົດບາດ, ຄວາມສຳຄັນຂອງວຽກງານປະກັນໄພເງິນຝາກຫຼາຍຂຶ້ນ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ສັງຄົມມາໃຊ້ບໍລິການເງິນຝາກຢູ່ສະຖາບັນການເງິນ ໂດຍຜ່ານເຄື່ອງມືໂຄສະນາປະຊາສຳພັນທີ່ມີປະສິດທິພາບ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ**